**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

-------------------

ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ

ເລກທີ 955 ຫສນຍ.ກລຂ

ນະຄອນຫລວງວຽງຈັນ, ວັນທີ 8-7-2016.

ດ່ວນທີ່ສຸດ

**ແຈ້ງການ**

ຮຽນ : - ທ່ານລັດຖະມົນຕີກະຊວງກະສິກຳ ແລະ ປ່າໄມ້.

- ທ່ານລັດຖະມົນຕີກະຊວງອຸດສາຫະກຳ ແລະ ການຄ້າ.

ເລື່ອງ : ການສົ່ງອອກຜະລິດຕະພັນໄມ້ສຳເລັດຮູບ.

- ອີງຕາມການລາຍງານຂອງທ່ານລັດຖະມົນຕີກະຊວງອຸດສາຫະກຳ ແລະ ການຄ້າ ລາຍງານຕໍ່ກອງປະຊຸມນາຍົກ-ຮອງນາຍົກລັດຖະມົນຕີ ຄັ້ງວັນທີ 20-21 ມິຖຸນາ 2016.

- ອີງຕາມບົດບັນທຶກຂອງກອງປະຊຸມນາຍົກ-ຮອງນາຍົກລັດຖະມົນຕີ ສະບັບເລກທີ 04/ນຍ, ລົງວັນທີ 24 ມິຖຸນາ 2016.

ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ຂໍຖືເປັນກຽດແຈ້ງມາຍັງທ່ານຊາບ ດັ່ງນີ້ :

"1).ເຫັນດີໃຫ້ກວດຄືນລະຫັດໄມ້ຝານ ແລະ ໄມ້ປອກ ທີ່ຍັງຕົກຄ້າງຢູ່ບັນດາໂຮງງານຕ່າງໆ ເພື່ອສົ່ງອອກ. ມອບໃຫ້ກະຊວງອຸດສາຫະກຳ ແລະ ການຄ້າ ແລະ ກະຊວງກະສິກຳ ແລະ ປ່າໄມ້ ເປັນເຈົ້າການສົມທົບກັບພາກສ່ວນກ່ຽວຂ້ອງ ກວດກາເບິ່ງສັນຍາ ແລະ ຂຶ້ນບັນຊີຈຳນວນໄມ້ແຕ່ລະປະເພດ ທີ່ຍັງຕົກຄ້າງຢູ່ບັນດາໂຮງງານໃຫ້ລະອຽດ ແລະ ຊັດເຈນ ແລ້ວຈຶ່ງຂໍອະນຸມັດໃຫ້ສົ່ງອອກ ແລະ ສົ່ງອອກໃນຈຳນວນທີ່ມີຢູ່ໃນໂຮງງານເທົ່ານັ້ນ, ສ່ວນໃນຕໍ່ໜ້າ ໃຫ້ຫັນມາປຸງແຕ່ງເປັນຜະລິດຕະພັນພາຍໃນ.

2). ໃຫ້ກະຊວງອຸດສາຫະກຳ ແລະ ການຄ້າ ກວດກາຄືນລະຫັດໄມ້ສຳເລັດຮູບໃຫ້ສອດຄ່ອງກັບຄຳສັ່ງເລກທີ 15/ນຍ. ເພື່ອອຳນວຍຄວາມສະດວກໃຫ້ບັນດາໂຮງງານປຸງແຕ່ງໄມ້ສຳເລັດຮູບທີ່ໄດ້ມາດຕະຖານ ແລະ ຖືກຕ້ອງກັບຄວາມຕ້ອງການຂອງຕະຫຼາດໄດ້ດຳເນີນການສົ່ງອອກ.

3). ສຳລັບໄມ້ປູກ ແມ່ນມອບໃຫ້ກະຊວງອຸດສາຫະກຳ ແລະ ການຄ້າ ສົມທົບກັບກະຊວງກະສິກຳ ແລະ ປ່າໄມ້ ແລະ ພາກສ່ວນກ່ຽວຂ້ອງ ຄົ້ນຄວ້າໃຫ້ລະອຽດຕື່ມ(ປະຈຸບັນບໍ່ອະນຸມັດໃຫ້ສົ່ງອອກເທື່ອ).

4). ໃຫ້ກະຊວງອຸດສາຫະກຳ ແລະ ການຄ້າ,ກະຊວງກະສິກຳ ແລະ ປ່າໄມ້ ເປັນເຈົ້າການສົມທົບກັບພາກສ່ວນກ່ຽວຂ້ອງ ກວດກາ ແລະ ຂຶ້ນບັນຊີໄມ້ ທີ່ຍັງຕົກຄ້າງຢູ່ສະໜາມ II ໃນຂອບເຂດທົ່ວປະເທດ

ມີທັງໝົດເທົ່າໃດ ? ມີໄມ້ປະເພດໃດແດ່ ? ຈາກນັ້ນ ໃຫ້ສະຫຼຸບສັງລວມຂຶ້ນບັນຊີລະອຽດ ລາຍງານລັດຖະບານ ເພື່ອປະມູນຂາຍຕາມລະບຽບຫຼັກການ. "

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານເພື່ອຊາບ ແລະ ຈັດຕັ້ງປະຕິບັດຕາມເນື້ອໃນຂ້າງເທິງໃຫ້ໄດ້ຮັບຜົນດີ.

ລັດຖະມົນຕີ,

ຫົວໜ້າຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ

ພ. ພອນແຊ

ເພັດ ພົມພິພັກ

<u>ບ່ອນນຳສົ່ງ :</u>

| | |
|---|---|
| - ນາຍົກ-ຮອງນາຍົກ | 04 ສະບັບ |
| - ຫ້ອງວ່າການສູນກາງພັກ | 01 ສະບັບ |
| - ເກັບມ້ຽນ | 08 ສະບັບ |